**ບົດໂອ້ລົມ**
**ຂອງສະຫາຍໄຊສົມພອນ ພົມວິຫານ**
**ກໍາມະການກົມການເມືອງສູນກາງພັກ,ປະທານສູນກາງແນວລາວສ້າງຊາດ**
**ຕໍ່ກອງປະຊຸມໃຫຍ່ຄັ້ງທີ XI ຂອງອົງຄະນະພັກແຂວງອັດຕະປືຄັ້ງວັນທີ 18 ກັນຍາ 2020**

**ຮຽນ: ຄະນະປະທານກອງປະຊຸມທີ່ນັບຖື!**
**ບັນດາສະຫາຍຜູ້ແທນ ແລະ ແຂກກອງປະຊຸມ ທີ່ຮັກແພງທັງຫຼາຍ!**

ຂ້າພະເຈົ້າຮູ້ສຶກເປັນກຽດ ແລະ ປິຕິຊົມຊື່ນເປັນຢ່າງຍິ່ງ, ທີ່ໄດ້ຮັບການມອບໝາຍຈາກກົມການເມືອງສູນກາງພັກ, ໃຫ້ຂ້າພະເຈົ້າເຂົ້າຮ່ວມກອງປະຊຸມໃຫຍ່ຂອງອົງຄະນະພັກ ຄັ້ງທີ XI ຂອງແຂວງອັດຕະປື ໃນເທື່ອນີ້, ກ່ອນອື່ນ, ຂ້າພະເຈົ້າ ຂໍສະແດງຄວາມຂໍານັບຊົມເຊີຍຕໍ່ກອງປະຊຸມໃຫຍ່ຄັ້ງທີ XI ຂອງອົງຄະນະພັກແຂວງອັດຕະປື, ຖືໂອກາດນີ້ຂໍນໍາເອົາຄວາມເປັນຫ່ວງເປັນໄຍ, ຄວາມສາມັກຄີຮັກແພງອັນສະໜິດສະໜົມ, ຄໍາອວຍພອນໄຊອັນປະເສີດຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ  ຕໍ່ບັນດາສະຫາຍຜູ້ແທນກອງປະຊຸມໃຫຍ່, ແຂກຖືກເຊີນທີ່ມີກຽດ, ພະນັກງານປະຕິວັດອາວຸໂສ, ບໍານານ, ນັກຮົບແຂ່ງຂັນ ທີ່ໄດ້ຕັ້ງໜ້າເຂົ້າຮ່ວມກອງປະຊຸມໃນຄັ້ງນີ້; ຜ່ານບັນດາສະຫາຍຂໍຝາກຄວາມຢື້ຢາມຖາມຂ່າວອັນອົບອຸ່ນ, ຄວາມສາມັກຄີ ຮັກແພງອັນສະໜິດສະໜົມ ໄປຍັງພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ ໃນທົ່ວແຂວງອັດຕະປື ມານະໂອກາດນີ້ຢ່າງສຸດອົກສຸດໃຈ( ຂໍຊົມເຊີຍ).

**ບັນດາສະຫາຍ ທີ່ນັບຖື ແລະຮັກແພງ!**

ກອງປະຊຸມໃຫຍ່ຄັ້ງທີ  XI ຂອງອົງຄະນະພັກແຂວງອັດຕະປື ໄດ້ໄຂຂຶ້ນໃນທ່າມ ກາງບັນຍາກາດທີ່ທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນລາວທັງຊາດ ພວມອອກ ແຮງແຂ່ງຂັນກັນຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ X ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 8 ກໍ່ຄືການສະ ເຫຼີມສະຫຼອງວັນບຸນສໍາຄັນປະຫວັດສາດ ຂອງພັກ-ຂອງຊາດ ເພື່ອສ້າງຜົນງານຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ທີ່ຈະໄຂຂຶ້ນໃນຕໍ່ໜ້າຢ່າງເປັນຂະບວນຟົດຟື້ນ.

ຄຽງຄູ່ກັນນັ້ນພວກເຮົາເຫັນແຈ້ງນໍາກັນແລ້ວວ່າ ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງອົງຄະນະພັກແຂວງ ຂອງພວກສະຫາຍ ຕະຫຼອດໄລຍະ 5 ປີທີ່ຜ່ານມາ ແມ່ນຢູ່ໃນສະພາບສາກົນ, ພາກພື້ນ ແລະ ຢູ່ພາຍໃນປະເທດຂອງພວກເຮົາທີ່ເຕັມໄປດ້ວຍອຸປະສັກ ແລະ ສິ່ງທີ່ທ້າທາຍຫຼາຍປະການ; ອັນພົ້ນເດັ່ນກໍ່ແມ່ນການແຂ່ງຂັນກັນພັດທະນາທາງດ້ານເທັກໂນໂລຢີ, ນະວັດຕະກໍາໃໝ່ຂອງບັນດາປະເທດພັດທະນາແລ້ວ ແລະ ບັນດາປະເທດກໍາລັງພັດທະນາ, ສົງຄາມການຄ້າລະຫວ່າງປະເທດມະຫາອໍານາດທາງດ້ານເສດຖະກິດ ແລະ ບັນຫາຄວາມຄັດແຍ່ງທາງດ້ານພູມລັດຖະສາດການເມືອງ, ຊຶ່ງສິ່ງເຫຼົ່ານັ້ນໄດ້ສົ່ງຜົນກະທົບທາງດ້ານບວກ ແລະ ດ້ານລົບໃຫ້ແກ່ດ້ານການເມືອງ, ຄວາມໝັ້ນຄົງ, ການຮ່ວມມື ແລະ ເສດຖະກິດລວມຂອງໂລກ ແລະ ພາກພື້ນບໍ່ໜ້ອຍ.

ຢູ່ພາຍໃນປະເທດຂອງພວກເຮົາ ກໍພົບຄວາມຫຍຸ້ງຍາກຫຼາຍດ້ານເປັນຕົ້ນ ແມ່ນດ້ານເສດຖະກິດ, ສະພາບການຂາດດູນງົບປະມານ; ພ້ອມກັນນັ້ນ, ຍັງປະເຊີນໜ້າກັບໄພພິບັດທາງທໍາມະຊາດ ແລະ ພະຍາດລະບາດຕ່າງໆ ແຕ່ເຖິງຢ່າງໃດກໍ່ຕາມ, ຜ່ານການເຄື່ອນໄຫວນໍາພາ-ຊີ້ນໍາຂອງຄະນະບໍລິຫານງານພັກແຂວງໃນ 5 ປີ ຜ່ານມາ ພວກສະຫາຍກໍ

ຍາດໄດ້ຜົນສຳເລັດໃນຫຼາຍດ້ານດັ່ງທີ່ໄດ້ຍົກຂຶ້ນໃນບົດລາຍງານການເມືອງ ຂ້າພະເຈົ້າກໍຕີລາຄາສູງຕໍ່ຜົນສຳເລັດດັ່ງກ່າວ ເປັນຕົ້ນແມ່ນ:

**ອັນທີໜຶ່ງ:** ແຂວງພວກສະຫາຍ ຍັງຮັກສາໄດ້ ສະຖຽນລະພາບທາງດ້ານການ ເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ຊຶ່ງເປັນປັດໃຈພື້ນຖານໃຫ້ແກ່ການສ້າງສາພັດທະນາແຂວງອັດຕະປື, ສ້າງຄວາມອຸ່ນອຽນ ທຸ່ນທ່ຽງໃຫ້ປະຊາຊົນ ແລະ ສ້າງຄວາມເຊື່ອໝັ້ນ, ໄວ້ວາງໃຈໃຫ້ກັບບັນດານັກທຸ ລະກິດ, ພໍ່ຄ້າຊາວຂາຍ ໃນການຕັດສິນໃຈລົງທຶນໃສ່ວຽກງານການຜະລິດ, ທຸລະກິດ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ທົ່ວສັງຄົມ ໄດ້ເຄື່ອນໄຫວວຽກງານຢ່າງຮອບດ້ານ...

**ອັນທີສອງ:** ວຽກງານການສ້າງເສດຖະກິດ ແມ່ນຍັງຮັກສາຈັງຫວະຂອງການຂະຫຍາຍຕົວຢູ່ໃນລະດັບທີ່ດີສົມຄວນ ຖ້າທຽບໃສ່ຄາດໝາຍລວມທີ່ໄດ້ກຳນົດໄວ້ໃນໄລຍະຜ່ານມາ ເສດຖະກິດເຕີບໂຕອັດຕາສະເລ່ຍ 7,5%; ລາຍຮັບຕໍ່ຫົວຄົນບັນລຸໄດ້ 2.011 ໂດລາ, ການດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດໄດ້ດີພໍສົມ ຄວນ, ການຟື້ນຟູຜົນກະທົບທາງໄພພິບັດເຂດເມືອງສະໜາມໄຊ ແລະ ເຂດອື່ນໆໃນທົ່ວແຂວງ, ໄດ້ຮັບການຈັດຕັ້ງປະຕິບັດຕາມແຜນການເປັນຢ່າງດີ.

**ອັນທີສາມ:** ໃນຂົງເຂດວັດທະນະທຳ-ສັງຄົມ ກໍ່ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ສາມາດປະຕິບັດໄດ້ ບັນດາຕົວເລກຄາດໝາຍ SDGs ຂອງອົງການສາຫະປະຊາຊາດກຳນົດໄວ້ນັ້ນດີສົມຄວນ, ໂດຍສະເພາະແມ່ນຊີ້ວັດ ຂົງເຂດສຶກສາ, ສາ ທາລະນະສຸກ, ການພັດທະນາສີມືແຮງງານ ກໍ່ໄດ້ຮັບການຍົກລະດັບເປັນກ້າວໆ. ກຳລັງແຮງງານໄດ້ຮັບການຄຸ້ມຄອງຖືກຕ້ອງຕາມກົດໝາຍ ແລະ ໄດ້ຮັບການເບິ່ງແຍງ ດ້ວຍນະໂຍບາຍປະກັນສັງຄົມຢ່າງກ້ວາງຂວາງຂຶ້ນ.

**ອັນທີສີ່**: ພວກສະຫາຍ ໄດ້ເອົາໃຈໃສ່ປັບປຸງກໍ່ສ້າງພັກ-ພະນັກງານ ໃຫ້ມີຄວາມໜັກແໜ້ນ, ສ້າງການຫັນປ່ຽນໃນຫຼາຍດ້ານ, ກົງຈັກການຈັດຕັ້ງພັກ, ລັດໄດ້ຮັບການປັບປຸງ, ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການ ເມືອງໄລຍະໃໝ່ນີ້; ພ້ອມນັ້ນ, ຍັງສາມາດນຳພາອົງການແນວລາວສ້າງຊາດ-ອົງການຈັດຕັ້ງມະຫາຊົນ ກໍ່ຄືປະຊາຊົນບັນດາເຜົ່າໃນທົ່ວແຂວງ ຮັກສາໄດ້ຄວາມສາ ມັກຄີເປັນປຶກແຜ່ນພ້ອມກັນທຸ່ມເທເຫື່ອແຮງເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາບ້ານເມືອງໃຫ້ມີຄວາມຈະເລີນກ້າວໜ້າ, ຊຶ່ງໄດ້ຕີລາຄາອອກຢູ່ໃນບົດລາຍງານການເມືອງ ແລະ ໝາກຜົນຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະ ກິດ-ສັງຄົມຂອງພວກສະຫາຍໃນຊຸມປີທີ່ຜ່ານມາ.

ຜົນສຳເລັດດັ່ງກ່າວ ກໍ່ຍ້ອນຄວາມສາມັກຄີເປັນເອກະພາບພາຍໃນຄະນະພັກ ແລະ ສະມາຊິກພັກທົ່ວອົງຄະນະພັກແຂວງ, ຄວາມຕັດສິນໃຈສູງເຊິ່ງແມ່ນໝາກຜົນ ລວມຍອດແຫ່ງສະຕິປັນຍາ, ການເສີມຂະຫຍາຍປະຊາທິປະໄຕ, ຫົວຄິດປະດິດສ້າງຂອງບັນດາຄະນະພັກ, ສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາ ຊົນບັນດາເຜົ່າແຂວງອັດຕະປື ທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງອົງຄະນະພັກແຂວງໃຫ້ມີຜົນສຳເລັດຢ່າງຈົບງາມ.

ຕາງໜ້າກົມການເມືອງ, ຄະນະເລຂາທິການສູນກາງພັກ ແລະ ໃນນາມສ່ວນຕົວຂ້າພະເຈົ້າ ຂໍສະແດງຄວາມຍ້ອງຍໍ, ຊົມເຊີຍ ຕໍ່ຜົນສຳເລັດ ແລະ ໝາກຜົນທີ່ພວກສະຫາຍຍາດມາໄດ້ຢ່າງສຸດອົກສຸດໃຈ **“ ຂໍຊົມເຊີຍ ”**

**ບັນດາສະຫາຍທີ່ຮັກແພງ!**

ຜົນສຳເລັດທີ່ຍາດມາໄດ້ ແມ່ນຫຼວງຫຼາຍ, ແຕ່ເມື່ອທຽບກັບການເລັ່ງທວງ ຂອງສະພາບການ, ຄວາມຮຽກຮ້ອງຕ້ອງການ ໃນການພັດທະນາ ກໍ່ຄືພາລະກິດປະ ຕິວັດ ຂອງພັກເຮົາໃນສະພາບແວດລ້ອມໃໝ່ ກໍ່ຍັງເຫັນມີຫຼາຍດ້ານທີ່ຕ້ອງໄດ້ເອົາ ໃຈໃສ່ບຸກບືນສູ້ຊົນໃຫ້ແຂງແຮງ ແລະ ດ້ວຍຈິດໃຈບຸກທະລຸຂຶ້ນຕື່ມອີກ. ແຂວງອັດຕະປື ກໍເປັນແຂວງໜຶ່ງຢູ່

ພາກໃຕ້ ເຊິ່ງມີທ່າແຮງໃນຫຼາຍດ້ານ ແຕ່ກໍຍັງມີຄວາມຫຍຸ້ງ ຍາກ, ສິ່ງທ້າທາຍດ້ານຕ່າງໆຢູ່ບໍ່ໜ້ອຍ ເຊິ່ງໃນກອງປະຊຸມເທື່ອນີ້ ພວກສະຫາຍກໍ່ໄດ້ມີຄວາມກ້າຫານຍົກບັນຫາຂຶ້ນຢ່າງພາວະວິໄສ ແລະ ກົງໄປກົງມາເປັນຕົ້ນ ແມ່ນສະ ພາບຊາຍແດນລາວ-ກຳປູເຈຍ ຍັງບໍ່ໄດ້ຮັບການແກ້ໄຂຢ່າງຂາດຕົວເທື່ອ, ການແກ້ໄຂໄພພິບັດຢູ່ເມືອງສະໜາມໄຊ ຍັງຄຸມເຄືອ, ແກ່ຍາວອັນໄດ້ສິ່ງຜົນສະທ້ອນບໍ່ໜ້ອຍຕໍ່ແນວຄິດຈິດໃຈຂອງປະຊາຊົນຜູ້ປະສົບຈາກໄພພິບັດດັ່ງກ່າວ; ຜົນໄດ້ຮັບໃນການພັດທະນາບໍ່ສົມຄູ່ກັບທ່າແຮງທາງດ້ານຊັບພະຍາກອນທຳມະຊາດ;  ເສດຖະກິດ-ການ ເງິນ ຍັງພົບຄວາມຫຍຸ້ງຍາກ, ປະກົດການຫຍໍ້ທໍ້ດ້ານຕ່າງໆ ຢູ່ພາຍໃນກົງຈັກພັກ-ລັດ ແລະ ໃນສັງຄົມ ຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງເຖິງຖອງ;ດ້ານແນວຄິດຂອງພະນັກງານ-ລັດຖະກອນ ກໍ່ຄືປະຊາຊົນບັນດາເຜົ່າຍັງບໍ່ທັນຫັນປ່ຽນຢ່າງຕັ້ງໜ້າ, ຮູບແບບການເຄື່ອນໄຫວວຽກງານ, ແບບແຜນການດຳລົງຊີວິດ, ການທຳມາຫາກິນຂອງປະຊາຊົນບໍ່ທັນຫັນປ່ຽນຢ່າງຕັ້ງໜ້າແທ້; ປະກົດການລັກລອບຕັດໄມ້ແບບຊະ ຊາຍ ຂອງປະຊາຊົນຢູ່ບໍລິເວນຊາຍແດນຍັງບໍ່ໄດ້ແກ້ໄຂໃຫ້ມີຄວາມສະຫງົບແທ້. ນອກນັ້ນ, ຍັງມີດ້ານອື່ນໆ ດັ່ງທີ່ໄດ້ສະແດງອອກໃນຮ່າງລາຍງານການເມືອງ, ຮ່າງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ. ສາຍເຫດຕົ້ນຕໍ ກໍ່ຍັງແມ່ນຄວາມສາມາດນຳພາ-ຄຸ້ມຄອງຂອງຄະນະພັກ ແລະ ອົງການປົກຄອງຂັ້ນຕ່າງໆ ຍັງບໍ່ທັນເຂັ້ມແຂງ, ການແບ່ງຄວາມຮັບຜິດຊອບ-ແບ່ງຂອບເຂດສິດ ແລະ ຂັ້ນຄຸ້ມຄອງ ໃນແຕ່ລະຂັ້ນຍັງບໍ່ທັນຈະແຈ້ງ;ຄວາມຮູ້ຄວາມສາມາດ, ການປະກອບພື້ນຖານວັດຖຸເຕັກນິກ, ວິທະຍາສາດ ຫຼາຍດ້ານຍັງຈຳກັດ, ບໍ່ທັນຕອບສະໜອງໃຫ້ແກ່ການພັດທະ  ນາ ກໍ່ຄືທ່າແຮງບົ່ມຊ້ອນຂອງແຂວງ.

ທັງໝົດທີ່ຂ້າພະເຈົ້າໄດ້ກ່າວມານັ້ນ ແມ່ນການສັງເກດໂດຍລວມ ຕໍ່ການນຳ ພາ-ຊີ້ນຳ ຂອງພວກສະຫາຍຕະຫຼອດໄລຍະຜ່ານມາ; ແຕ່ກໍ່ຢາກໃຫ້ພວກສະຫາຍສືບ ຕໍ່ຄົ້ນຄ້ວາໃຫ້ເລິກເຊິ່ງຕື່ມ, ຊອກໃຫ້ເຫັນໄດ້ດ້ານທີ່ຈຳກັດອັນເປັນສາຍ ເຫດຕົ້ນຕໍທີ່ກີດໜ່ວງທ່ວງດຶງຕໍ່ການພັດທະນາ ກໍ່ຄືດ້ານທີ່ເຮັດໃຫ້ບົດບາດການນຳພາຂອງຄະ ນະພັກບໍ່ສູງເດັ່ນເພື່ອພ້ອມກັນຊອກວິທີແກ້ໄຂໃຫ້ໝົດໄປ.

**ບັນດາສະຫາຍ ທີ່ຮັກແພງທັງຫຼາຍ!**

ໃນສະພາບສາກົນ ແລະ ພາກພື້ນພວມຢູ່ໃນການປ່ຽນແປງຢ່າງຮອບດ້ານ, ບໍ່ວ່າຈະເປັນການປ່ຽນແປງທາງດ້ານສະພາບດິນຟ້າອາກາດ, ກໍ່ຄືຄວາມຂັດແຍ້ງທາງດ້ານການເມືອງ-ເສດຖະກິດ, ໄພທຳມະຊາດ, ໂລກລະບາດອື່ນໆ... ທີ່ເພີ້ມທະວີຄວາມຮຸນແຮງຂຶ້ນເລື້ອຍໆ ແລະ ຍັງບໍ່ມີທ່າທີວ່າໃນຊຸມປີຕໍ່ໜ້າບັນຫາເຫົ່ານັ້ນຈະໝົດໄປໄດ້;  ປັດຈຸບັນປະເທດຊາດຂອງພວກເຮົາພວມຢູ່ໃນຍຸກແຫ່ງການເຊື່ອມໂຍງທີ່ມີທັງກາລະໂອກາດ ແລະ ສິ່ງທ້າທາຍທົດສອບເຖິງຄວາມສາມາດນຳພາຂອງພັກເຮົາ. ກໍຄືຂອງຄະນະພັກແຕ່ລະຂັ້ນ ແຕ່ເຖິງຢ່າງໃດກໍ່ຕາມແຂວງອັດຕະປືກໍ່ເຄີຍມີມູນເຊື້ອວິລະຊົນ ແລະ ພິລາດອາດຫານໃນໄລຍະແຫ່ງການຕໍ່ສູ້ ເພື່ອເອກະ ລາດແຫ່ງຊາດ ຂອງປະຊາຊົນບັນດາເຜົ່າແຂວງອັດຕະປືໃນເມື່ອກ່ອນ, ມູນເຊື້ອແຫ່ງຄວາມສາມັກຄີເປັນປຶກແຜ່ນໃນອົງຄະນະພັກ, ຄວາມດຸໝັ່ນຂະຫຍັນພຽນຂອງປະຊາຊົນບັນດາເຜົ່າໃນຍຸກແຫ່ງການພັດທະນາ; ພ້ອມນັ້ນ,  ແຂວງອັດຕະປືກໍຍັງມີທ່າ ແຮງຫຼາຍດ້ານ. ບົນຈິດໃຈດັ່ງກ່າວ, ນັ້ນໃນກອງປະຊຸມຄັ້ງນີ້ ພວກສະຫາຍ ກໍ່ໄດ້ກຳນົດທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມໃນຊຸມປີຕໍ່ໜ້າຢ່າງລະອຽດ, ຈະແຈ້ງສົມຄວນແລ້ວ; ແຕ່ໃນໂອກາດອັນມີຄວາມໝາຍສຳຄັນນີ້ ຂ້າພະເຈົ້າ ມີຄວາມເຫັນ ເນັ້ນຕື່ມບາງອັນດັ່ງນີ້:

ໃນຊຸມປີຕໍ່ໜ້າ ຄາດໝາຍໃຫຍ່ຕົ້ນຕໍຂອງແຂວງອັດຕະປື ແມ່ນຮັບປະກັນສະ ຖຽນລະພາບທາງດ້າການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ, ຍຸຕິທຳ; ສຸມໃສ່ຍົກລະດັບຄວາມສາມາດນຳພາຂອງຄະນະພັກ, ປັບປຸງລະບົບການຈັດຕັ້ງຂັ້ນຕ່າງໆໃຫ້ມີການຫັນປ່ຽນຢ່າງແຂງແຮງ, ຮອບດ້ານ ແລະ ເລິກເຊິ່ງ; ສ້າງຄວາມສາມັກຄີເປັນປຶກແຜ່ນພາຍໃນພັກ, ກຳລັງປະກອບອາວຸດ ແລະ ປະຊາຊົນບັນດາ ເຜົ່າ, ເຊີດຊູນໍ້າໃຈຮັກຊາດ, ເປັນເຈົ້າຕົນເອງ, ກຸ້ມຕົນເອງ ແລະ

ສ້າງຄວາມເຂັ້ມ ແຂງດ້ວຍຕົນເອງ; ຂຸດຄົ້ນທ່າແຮງບົ່ມຊ້ອນພາຍໃນ, ໝູນໃຊ້ກາລະໂອກາດ ແລະ ການຮ່ວມມືກັບເພື່ອນມິດສາກົນ, ພັດທະນາເສດຖະກິດ-ສັງຄົມໃຫ້ມີການຂະຫຍາຍຕົວຢ່າງໜັກແໜ້ນຕໍ່ເນື່ອງ, ມີຖານລາຍຮັບໝັ້ນຄົງ, ສຸມໃສ່ແກ້ໄຂຄວາມທຸກຍາກ, ຊີ ວິດການເປັນຢູ່ຂອງປະຊາຊົນດີຂຶ້ນກວ່າເກົ່າ. ໃນນັ້ນ, ສະເໜີບັນດາສະຫາຍເອົາໃຈໃສ່:

**ອັນທີໜຶ່ງ:** ພວກເຮົາຕ້ອງສືບຕໍ່ຍຶດໝັ້ນອຸດົມການຂອງພັກຢ່າງສະເໝີຕົ້ນ ສະເໝີປາຍ, ກຳແໜ້ນຫຼັກການແລະທິດນຳແຫ່ງການກໍ່ສ້າງພັກ; ຕັ້ງໜ້າປັບປຸງປົວແປງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ໂດຍສະເພາະຕ້ອງຮັກສາລັກສະນະນຳໜ້າ, ເປັນແບບຢ່າງໃນທຸກດ້ານຂອງສະມາຊິກພັກແຕ່ລະຂັ້ນ.

– ການນຳພາຕ້ອງຮັບປະກັນໃຫ້ໄດ້ຫຼັກການລວມສູນປະຊາທິປະໄຕ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ເຂັ້ມງວດ, ເຮັດໃຫ້ພັກກາຍເປັນກ້ອນກຳລັງເອກະພາບທາງດ້ານແນວຄິດ ແລະ ການກະທຳ; ໃນຕໍ່ໜ້ານີ້ ພວກສະຫາຍຕ້ອງເອົາ ໃຈໃສ່ຂະຫຍາຍປະຊາທິປະໄຕພາຍໃນພັກ ແລະ ທົ່ວສັງຄົມຕິດພັນກັບການເພີ່ມທະວີຄວາມຮັບຜິດຊອບ ແລະ ຄວາມເຂັ້ມງວດກວດຂັນທາງດ້ານລະບຽບວິໄນ, ເປັນເຈົ້າການ ແລະ ເດັດດ່ຽວຕໍ່ສູ້ຕ້ານປະກົດການຫຍໍ້ທໍ້ຕ່າງໆ ໂດຍສະເພາະປະກົດການອາດຍາສິດ, ເອກາທິປະໄຕ, ລ່ວງລະເມີດສິດປະຊາທິປະໄຕ ແລະ ສິດເປັນເຈົ້າຂອງປະຊາຊົນ,ລັດທິເອກະຊົນຄັບແຄບ, ພາກສ່ວນກຸ່ມກ້ອນຜົນປະໂຫຍດ, ບໍ່ເຄົາ ລົບລະບຽບວິໄນ.

– ພ້ອມກັນນັ້ນ ກໍ່ຕ້ອງປະຕິບັດຫຼັກການຕິຊົມຕົນເອງ ແລະ ຕິຊົມກັນກໍ່ສ້າງກັນໃນການດຳເນີນຊີວິດພັກໃຫ້ເຂັ້ມງວດ ແລະ ເປັນປະຈຳ; ສືບຕໍ່ປັບປຸງກົງຈັກການ ຈັດຕັ້ງໃນທົ່ວອົງຄະນະພັກແຂວງ, ເມືອງໃຫ້ເຂັ້ມແຂງ, ເຄື່ອນໄຫວມີປະສິດທິພາບ, ເອົາໃຈໃສ່ບຳລຸງ, ຍົກລະດັບເລຂາໜ່ວຍພັກ, ນາຍບ້ານໃຫ້ຮູ້ນຳພາຢູ່ຮາກຖານ ເພື່ອເຮັດຫຼ້ອນພາລະບົດບາດນຳພາຂອງຕົນເປັນຢ່າງດີ.

– ໃນຕໍ່ໜ້ານີ້ ພວກສະຫາຍຍັງຕ້ອງໄດ້ສືບຕໍ່ກໍ່ສ້າງພັກ-ພະນັກງານ ໃຫ້ເຂັ້ມແຂງແລະ ໜັກແໜ້ນ, ສືບຕໍ່ຍົກສູງລະດັບຄວາມຮູ້ ແລະ ຄວາມສາມາດນຳພາໃນຂະບວນການວຽກງານຕົວຈິງໃຫ້ສູງຂຶ້ນ ໃຫ້ສາມາດເປັນຫຼັກແຫຼ່ງນຳພາຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ໃນຕໍ່ໜ້າ ແລະ ມະຕິກອງປະ ຊຸມໃຫຍ່ຄັ້ງທີ XI ຂອງອົງຄະນະພັກແຂວງໃຫ້ເຂົ້າສູ່ຊີວິດຕົວຈິງ ແລະ ມີໝາກມີຜົນນັບມື້ສູງຂຶ້ນ.

**ສອງ:** ຄະນະພັກພວກເຮົາ ຕ້ອງເອົາໃຈໃສ່ນຳພາປຸກລະດົມທົ່ວປວງຊົນເຂົ້າຮ່ວມໃນພາລະກິດປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ໃນທົ່ວສັງຄົມຢ່າງບໍ່ລົດລະເພື່ອສືບຕໍ່ສ້າງພື້ນຖານ ປະຖົມປັດໃຈທີ່ເອື້ອອຳນວຍໃຫ້ແກ່ການພັດທະນາຢ່າງຕໍ່ເນື່ອງ, ສ້າງແຮງດຶງດູດ ແລະ ຄວາມໝັ້ນໃຈໃຫ້ແກ່ການລົງທຶນໃສ່ໃນທຸກຂົງເຂດວຽກງານຢ່າງຕັ້ງໜ້າ.

**ສາມ:** ຍົກສູງບົດບາດຄວາມສາມາດນຳພາຂອງຄະນະພັກແຕ່ລະຂັ້ນ, ກໍ່ຄືຄວາມສາມາດໃນການຄຸ້ມຄອງ-ບໍລິຫານ ຂອງອົງການປົກຄອງທຸກຂັ້ນ ໂດຍສະເພາະແມ່ນນຳພາຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງນີ້ໃຫ້ມີຄຸນນະພາບສູງ ແລະ ແທດເຖິງກວ່າເກົ່າ; ໃນນີ້, ການກຳນົດບັນດາຄາດໝາຍສູ້ຊົນມະຫາພາກແຕ່ລະດ້ານໃຫ້ມີຄວາມສົມເຫດສົມຜົນ, ຕ້ອງໄດ້ຄຳນຶງເຖິງຄວາມອາດສາມາດໃນການຈັດຕັ້ງປະຕິບັດຕົວຈິງ, ໂດຍສະເພາະບັນຫາການຊອກຫາແຫຼ່ງທຶນ ພ້ອມທັງເບິ່ງທ່າແຮງບົ່ມຊ້ອນ ແລະ ກຳລັງຄວາມສາມາດຂອງຖັນແຖວບຸກຄະລະກອນ ແລະ ປະຊາຊົນ ບໍ່ໃຫ້ແລ່ນນຳຄວາມຢາກໄດ້ຢ່າງດຽວ, ຕ້ອງໄດ້ຄົ້ນ ຄ້ວາຢ່າງເລິກເຊິ່ງ ໂດຍຖອດບົດຮຽນໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງອົງຄະນະພັກແຂວງຜ່ານມາ.

– ໃນຊຸມປີຕໍ່ໜ້າ ຄາດໝາຍຕົ້ນຕໍແມ່ນສຸມໃສ່ແກ້ໄຂຄວາມທຸກຍາກຂອງປະຊາ ຊົນ, ສ້າງຄວາມຢູ່ດີ, ກິນດີ ແລະ ຍົກລະດັບຊີວິດການເປັນຢູ່ ເຮັດໃຫ້ປະຊາຊົນມີຄວາມຜາສຸກ, ສ້າງພື້ນຖານເສດຖະກິດ-ສັງຄົມ ຂອງແຂວງໃຫ້ມີຄວາມໜັກແໜ້ນ ແລະ ມີການຫັນປ່ຽນທີ່ຕັ້ງໜ້າຕາມທິດພັດທະນາແບບຍືນຍົງ ແລະ ສີຂຽວ ໂດຍສະ ເພາະແມ່ນການ

ສ້າງບ້ານຢູ່ດີກິນດີ ຢູ່ເມືອງສະໜາມໄຊເພື່ອເຮັດໃຫ້ເປັນຕົວແບບ ກ່ຽວກັບບັນຫານີ້ພວກສະຫາຍຕ້ອງໄດ້ຄົ້ນຄວ້າໃຫ້ເລິກເຊິ່ງ ແລະ ຮອບດ້ານແທ້ໆ. ເມືອງສະໜາມໄຊ ເປັນເມືອງທີ່ໄດ້ຮັບຜົນກະທົບໂດຍກົງຈາກເຂື່ອນເຊປຽນ-ເຊ ນ້ຳນ້ອຍແຕກພັງນັ້ນ. ສະນັ້ນ, ບໍ່ອາດຫຼີກລ້ຽງໄດ້ຜົນກະທົບຕໍ່ປະຊາຊົນ ບໍ່ວ່າທາງດ້ານວັດຖຸ ກໍ່ຄືຜົນກະທົບທາງດ້ານຈິດໃຈຂອງເຂົາເຈົ້າ; ໃນໂອກາດທີ່ພວກເຮົາໄດ້ດຳເນີນການຟື້ນຟູຊີວິດການເປັນຢູ່ໃຫ້ເຂົາເຈົ້ານີ້ ກໍ່ເປັນກາລະໂອກາດອັນດີທີ່ຄະນະພັກ, ຄະນະນຳຂອງແຂວງໄດ້ມີແນວຄິດລິເລີ່ມໃໝ່ໂດຍການສ້າງບ້ານພັດທະນາ, ປະຊາຊົນຢູ່ດີກິນດີ ແລະ ກໍ່ໄດ້ຕົກລົງເລືອກເອົາເມືອງສະໜາມໄຊ ເພື່ອສ້າງເປັນຕົວແບບ. ສະນັ້ນ, ບັນດາສະຫາຍຕ້ອງໄດ້ຄົ້ນຄິດເຖິງບັນດາປັດໃຈພື້ນຖານຕ່າງໆໃຫ້ໄດ້ຢ່າງລະອຽດຖີ່ຖ້ວນ, ເປັນຕົ້ນ, ແມ່ນການຈັດສັນທີ່ຢູ່ອາໃສ, ການຈັດສັນອາຊີບທີ່ໝັ້ນທ່ຽງ, ບ່ອນທຳການຜະລິດ ແລະ ອື່ນໆ.ໃຫ້ມີຄວາມສອດຄ່ອງ. ນອກນັ້ນ, ສິ່ງສຳຄັນອັນໜຶ່ງ ແມ່ນຕ້ອງໄດ້ເອົາໃຈໃສ່ສ້າງ ແລະ ປັບປຸງໃຫ້ມີຄວາມສີວິໄລໃນດ້ານອາລິຍະທຳ, ໃຫ້ມີຄວາມຈະເລີນສີວິໄລທາງດ້ານວັດທະນະທຳ-ສັງຄົມ ໄປພ້ອມໆກັນໂດຍຕິດພັນກັບການເສີມຂະຫຍາຍມູນເຊື້ອອັນດີງາມ ຂອງເຜົ່າຢູ່ໃນເຂດດັ່ງກ່າວນັ້ນ.

– ໃຫ້ເອົາໃຈໃສ່ແກ້ບັນຫາຮີດເກົ່າຄອງເດີມ ຂາດຄວາມກະຕືລືລົ້ນໃນການພັດ ທະນາຂອງປະຊາຊົນໃນເຂດຊົນເຜົ່າ-ຫ່າງໄກ,ຍົກສູງສະຕິຄວາມເປັນເຈົ້າ, ຫົວຄິດ ປະດິດສ້າງ, ພູມປັນຍາຂອງປວງຊົນ ເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາໃຫ້ສູງຂຶ້ນກ່ວາເກົ່າ.

**ສີ່:**ເພີ່ມທະວີການຄຸ້ມຄອງ, ບໍລິການຂອງອົງການປົກຄອງແຕ່ລະຂັ້ນໃຫ້ ມີຄວາມສັກສິດ, ເຂັ້ມງວດ, ຍຸດຕິທຳ ແລະ ບໍລິການຮັບໃຊ້ປະຊາຊົນຢ່າງແທ້ຈິງ. ໃນຕໍ່ໜ້ານີ້ ພວກສະຫາຍຈົ່ງພ້ອມກັນເອົາໃຈໃສ່ປັບປຸງກົນໄກການບໍລິການຄຸ້ມຄອງລັດ, ຄຸ້ມຄອງສັງຄົມຕາມກົດໝາຍໃຫ້ເຂັ້ມງວດ ໂດຍໃຫ້ຖືເອົາວຽກນີ້ເປັນວຽກທີ່ຮີດ່ວນ ແລະ ທັງເປັນໜ້າທີ່ຍາວນານພື້ນຖານຂອງການນຳພາຂອງພັກ, ພ້ອມກັບການສ້າງອຳນາດລັດໃຫ້ເຂັ້ມແຂງ ໄປຄວບຄູ່ກັບການພັດທະນາເສດຖະກິດ-ສັງຄົມ ພວກສະຫາຍກໍ່ຕ້ອງເອົາໃຈໃສ່ໃນການບໍລິການປະຊາຊົນໃຫ້ມີຄວາມສະດວກ, ວ່ອງໄວ ເຮັດໃຫ້ທົ່ວສັງຄົມດຳລົງຊີວິດພາຍໃຕ້ລັດຖະທຳມະນູນ ແລະ ກົດໝາຍຢ່າງເຂັ້ມງວດ ແລະຮັບປະກັນຄວາມຍຸຕິທຳແທ້. ເອົາໃຈໃສ່ເສີມຂະຫຍາຍ ສິດເປັນເຈົ້າຂອງປະຊາຊົນ ແລະ ປົກປ້ອງຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ຕັ້ງໜ້າປັບປຸງກົນໄກ, ລະບຽບການອັນຈຳເປັນກ່ຽວກັບການຄຸ້ມຄອງບໍລິ ການໃຫ້ດີ ເພື່ອບໍ່ໃຫ້ມີຊ່ອງວ່າງ; ເດັດຂາດກຳຈັດປັດເປົ່າປະກົດການອາດຍາສິດ, ການລ່ວງອຳນາດ, ການສໍ້ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້ອື່ນໆ ເຮັດໃຫ້ກົງຈັກທົ່ວອົງຄະນະພັກແຂວງມີຄວາມປອດໃສ, ຄຸ້ມຄອງບໍລິການສັງຄົມຢ່າງມີປະສິດທິຜົນ, ສ້າງໃຫ້ລັດເຮົາກາຍເປັນລັດຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນຢ່າງແທ້ຈິງ.

**ຫ້າ:** ການສ້າງຊັບພະຍາກອນມະນຸດ (ຄົນ) ຖືເປັນປັດໄຈຕັດສິນ, ອັນສຳຄັນ ໃຫ້ສືບຕໍ່ຍູ້ແຮງລະບົບການສຶກສາໃຫ້ເຂັ້ມແຂງທົ່ວເຖິງ ເປັນຕົ້ນ ຢູ່ເຂດຊົນນະບົດຫ່າງໄກ-ສອກຫຼີກ ໃຫ້ມີເງື່ອນໄຂ ແລະ ກາລະໂອກາດ ເຂົ້າຮຽນຫຼາຍຂຶ້ນ ທັງຄວບຄູ່ກັບຄຸນນະພາບ, ໃຫ້ປະຊາຊົນມີຄວາມຮູ້, ຄວາມສາມາດ ກາຍເປັນຜູ້ຜະລິດສິນຄ້າ ທັງເປັນຜູ້ຮູ້ນຳໃຊ້ຊັບພະຍາກອນທຳມະຊາດ ທີ່ອຸດົມສົມບູນ ແລະ ເປັນທ່າແຮງຂອງແຂວງ.

ພ້ອມນັ້ນໃຫ້ສຸມໃສ່ພັດທະນາສີມືແຮງງານ ເພາະວ່າແຮງງານຂອງພວກເຮົາສ່ວນຫຼາຍແມ່ນແຮງງານທີ່ບໍ່ໄດ້ຜ່ານການຝຶກອົບຮົມ (ແຮງງານດິບ) ເຊິ່ງລວມທັງການສ້າງພະນັກງານໃຫ້ມີຄວາມຮູ້ທາງດ້ານວິຊາການ, ມີຄວາມສຳນານງານ, ມີຊ່ຽວຊານສະເພາະດ້ານ, ມີຄວາມສາມາດ ແລະ ຮູ້ນຳພາປະຊາຊົນເຮັດຕົວຈິງ ພ້ອມທັງຍົກລະດັບຄວາມຮັບຮູ້ຂອງປະຊາຊົນໃຫ້ສູງຂຶ້ນ (ນຳພາປະຊາຊົນໃຫ້ຮູ້ຜະ ລິດ, ຮູ້ຄ້າຂາຍ, ຮູ້ນຳໃຊ້ເຕັກນິກວິທະຍາສາດ) ບໍ່ດັ່ງນັ້ນຄວາມທຸກຍາກກໍ່ແກ້ໄຂບໍ່ໄດ້. ອັນຮີບດ່ວນ ແມ່ນຕ້ອງກຳນົດເປັນແຜນງານ, ໂຄງການຢ່າງລະອຽດ, ຈະ ແຈ້ງ ເພື່ອພັດທະນາ ແລະ ຍົກລະດັບສີມືແຮງງານ ແນໃສ່ສ້າງຄວາມສາມາດແກ່ງແຍ່ງແຂ່ງຂັນ; ພ້ອມກັນນັ້ນ,ຄວນຈັດສັນແຮງງານຕ່າງປະເທດໃຫ້ດີ,

ສຳຄັນແມ່ນຕ້ອງຮັບປະກັນໃຫ້ຄົນເຮົາໄດ້ຮຽນຮູ້, ພັດທະນາ ແລະ ຍົກລະດັບດ້ານທັກສະສີມືແຮງງານ, ເຕັກນິກ-ວິຊາການນຳແຮງງານຕ່າງປະເທດໃຫ້ໄດ້ຫຼາຍ.

**ຫົກ:** ພາຍຫຼັງສຳເລັດກອງປະຊຸມໃຫຍ່ຄັ້ງນີ້ແລ້ວ ໃຫ້ຮີບຮ້ອນແບ່ງວຽກ-ແບ່ງງານ, ແບ່ງຄວາມຮັບຜິດຊອບພາຍໃນຄະນະບໍລິຫານງານພັກແຂວງ, ຄະນະປະຈຳພັກແຂວງໃຫ້ລະອຽດ,ຈະແຈ້ງ, ບໍ່ວ່າຈະແມ່ນວຽກງານຢູ່ຂະແໜງການໃດ, ຂົງເຂດ ໃດເມື່ອໝູ່ຄະນະ, ການຈັດຕັ້ງ ກໍ່ຄືຂັ້ນເທິງໄດ້ມອບໝາຍໃຫ້ໄປຮັບຜິດຊອບ ກໍຕ້ອງເອົາໃຈໃສ່ປະຕິບັດດ້ວຍຄວາມຮັບຜິດຊອບ, ບໍ່ໃຫ້ເລືອກວຽກ, ຕ້ອງເຊີດຊູຄວາມເປັນເຈົ້າການຕໍ່ໜ້າທີ່ການເມືອງ, ທຸ້ມເທເຫື່ອແຮງ, ສະຕິປັນຍາ, ຄວາມຮູ້, ຄວາມສາມາດ, ມີຄວາມເສຍສະຫຼະ ເພື່ອເຮັດສຳເລັດໜ້າທີ່. ພວກເຮົາຕ້ອງເຂົ້າໃຈນຳກັນຕື່ມອີກວ່າການເຂົ້າມາຢູ່ໃນຄະນະບໍລິຫານງານພັກແຂວງບໍ່ແມ່ນເພື່ອມາເປັນອາດຍາເຈົ້ານາຍ, ບໍ່ແມ່ນເພື່ອມາສວຍໃຊ້ໜ້າທີ່ຕຳແໜ່ງ, ຫາຜົນປະໂຫຍດສ່ວນຕົວຕ້ອງຖືວ່າ ແມ່ນເຂົ້າມາ ເພື່ອຮັບໃຊ້ພາລະກິດປະຕິວັດອັນສູງສົ່ງຂອງພັກ, ນັ້ນແມ່ນເຮັດທຸກສິ່ງທຸກຢ່າງ ເພື່ອຄວາມສົມບູນພູນສຸກຂອງປະຊາຊົນ ເພື່ອຄວາມຈະເລີນວັດທະນາຂອງປະເທດຊາດ.

**ເຈັດ:**ສຳລັບສະຫາຍ ເລຂາພັກແຂວງ, ສະຫາຍ ເລັດ ໄຊຍະພອນ ໄດ້ຮັບການເລືອກຕັ້ງຄືນໃໝ່ ເພື່ອພ້ອມກັບໝູ່ຄະນະທີ່ໄດ້ຮັບການເລືອກຕັ້ງໃນກອງປະຊຸມໃຫຍ່ຄັ້ງນີ້ຈະຕ້ອງໄດ້ສືບຕໍ່ເປັນຫຼັກແຫຼ່ງ,ຊີ້ນຳ-ນຳພາ ເຊິ່ງສະຫາຍ ເລັດ ໄຊຍະພອນ ກໍ່ໄດ້ມີບົດຮຽນປະສົບການໃນການນຳພາສະໄໝໜຶ່ງແລ້ວ ແຕ່ຢ່າງໃດກໍ່ດີບັນດາສະ ຫາຍທັງໝົດ ນັບທັງຄະນະພັກຊຸດເກົ່າທີ່ອອກພັກຜ່ອນຮັບອຸດໜູນບຳນານ ແລະ ຄະນະພັກຊຸດໃໝ່ຕະຫຼອດເຖິງສະມາຊິກພັກ, ພະນັກງານ , ກໍ່ຄືປະຊາຊົນບັນດາເຜົ່າຈົ່ງສືບຕໍ່ໃຫ້ການຊ່ວຍເຫຼືອສະໜັບສະໜູນ ແລະ ຮ່ວມມືກັບສະຫາຍເລຂາພັກແຂວງ ເພື່ອເຮັດສຳເລັດໜ້າທີ່ການເມືອງທີ່ກອງປະຊຸມຄັ້ງນີ້ມອບໝາຍໃຫ້.

**ແປດ:** ສືບຕໍ່ນຳພາຊີ້ນຳການຈັດຕັ້ງຜັນຂະຫຍາຍເນື້ອໃນ ມະຕິກອງປະຊຸມໃຫຍ່ຄັ້ງນີ້ ໃຫ້ເປັນແຜນງານ, ໂຄງການ ແລະ ສ້າງເປັນນິຕິກຳລະອຽດ ເລີ່ມຕັ້ງແຕ່ການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ໃນຄະນະບໍລິຫານງານພັກແຂວງລົງໄປເຖິງຄະນະພັກແຕ່ລະຂັ້ນ, ສະມາຊິກພັກ, ພະນັກງານ ຢູ່ບັນດາເມືອງ, ຂະແໜງການ ແລະ ຮາກຖານຕ່າງໆ ກໍ່ຄືປະຊາຊົນບັນດາເຜົ່າ ໃຫ້ເລິກເຊິ່ງ ແລະ ທົ່ວເຖິງ, ເພື່ອສ້າງຄວາມຮັບຮູ້ເຂົ້າໃຈ ແລະ ເປັນເອກະພາບກັນທາງດ້ານທັດສະນະ ແລະ ການກະທຳຕົວຈິງ, ເຮັດໃຫ້ພະນັກງານ ແລະ ປະຊາຊົນມີຄວາມຮັບຮູ້, ເຂົ້າໃຈ ແລະ ເຊື່ອມຊຶ່ມ, ກຳແໜ້ນ ຕໍ່ທິດທາງ, ແຜນນະໂຍບາຍ, ຄາດໝາຍສູ້ຊົນຕ່າງໆ ແລະ ມີຄວາມຕື່ນຕົວ ເປັນເຈົ້າການເຂົ້າຮ່ວມການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງນີ້ ຢ່າງເປັນຂະບວນການທີ່ແຂງແຮງ, ຕໍ່ເນື່ອງ ແລະ ມີປະສິດທິຜົນ.

**ບັນດາສະຫາຍ ທີ່ຮັກແພງ!**

ກອງປະຊຸມໃຫຍ່ຂອງອົງຄະນະພັກ ແຂວງອັດຕະປື ໄດ້ສຳເລັດຕາມຈຸດປະສົງຄາດໝາຍ, ຂ້າພະເຈົ້າ ເຊື່ອໝັ້ນວ່າພາຍໃຕ້ການຊີ້ນຳ ຂອງຄະນະພັກຊຸດໃໝ່ ອັນມີສະຫາຍ ເລັດ ໄຊຍະພອນ ເປັນຜູ້ນຳໜ້າ ແລະ ດ້ວຍມູນເຊື້ອອັນດີງາມໃນການນຳພາ, ຄວາມເປັນປຶກແຜ່ນແໜ້ນໜາຂອງຄະນະພັກ ກໍ່ຄືປະຊາຊົນບັນດາເຜົ່າໃນແຂວງ ຈະສືບຕໍ່ເຮັດໃຫ້ມະຕິກອງປະຊຸມໃຫຍ່ ຄັ້ງທີ XIຂອງອົງຄະນະພັກແຂວງຄັ້ງນີ້ ໃຫ້ປະກົດຜົນເປັນຈິງ,ເຮັດໃຫ້ແຂວງອັດຕະປືໄດ້ຮັບການພັດທະນາກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

ທ້າຍນີ້ຂໍອວຍພອນແດ່ບັນດາສະຫາຍ ໃນຄະນະປະທານ, ບັນດາສະຫາຍຜູ້ແທນກອງປະຊຸມ, ແຂກ, ພະນັກງານປະຕິວັດອາວຸໂສບຳນານ,ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດປະຊາຊົນບັນດາເຜົ່າ ຈົ່ງມີສຸຂະພາບ

ເຂັ້ມແຂງ, ມີພາລະນາໄມສົມບູນ, ມີຄວາມຜາສຸກໃນຊີວິດ ແລະ ພ້ອມກັນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງນີ້ ໃຫ້ມີຜົນສໍາເລັດອັນຈົບງາມ.

**ຂໍຂອບໃຈ**